**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ 03 /ຈຂອປ
ອັດຕະປື, ວັນທີ 24 ມັງກອນ 2024

# ຄຳສັ່ງ
## ວ່າດ້ວຍການຢຸດຕິການສຳຫຼວດ, ການຂຸດຄົ້ນໄມ້, ທ້ອນໂຮມໄມ້ ໃນທົ່ວແຂວງອັດຕະປື

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ຄັ້ງທີ 10 ສະໄໝທີ XI;
- ອີງຕາມ ໜັງສືສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ສະບັບເລກທີ 0150/ກປຂ.ອປ, ລົງວັນທີ 23 ມັງກອນ 2024.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ຢຸດຕິທຸກການເຄື່ອນໄຫວທັງໝົດກ່ຽວກັບການສຳຫຼວດ, ການຂຸດຄົ້ນໄມ້, ທ້ອນໂຮມໄມ້ ໃນທົ່ວແຂວງອັດຕະປື; ກໍລະນີມີແຈ້ງການຂອງລັດຖະບານ ຫຼື ອົງການຈັດຕັ້ງຂັ້ນສູນກາງ ( ເຈົ້າແຂວງຈະມອບໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ, ເມືອງ, ສະມາຊິກສະພາປະຊາຊົນແຂວງ ລົງກວດກາ ແລະ ປະເມີນຄືນໃຫ້ລະອຽດ ແລ້ວລາຍງານໃຫ້ການນຳຂອງແຂວງມີທິດຊີ້ນຳໃນການຈັດຕັ້ງປະຕິບັດ, ຖ້າບໍ່ສົມເຫດສົມຜົນ ແມ່ນຈະໄດ້ລາຍງານຄືນໃຫ້ຂັ້ນເທິງເພື່ອຢຸດຕິ );
2. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດຳເນີນການສຳຫຼວດ, ການຂຸດຄົ້ນໄມ້, ທ້ອນໂຮມໄມ້ ຢູ່ໃນ ແລະ ນອກ 3 ປະເພດປ່າໃນທົ່ວແຂວງອັດຕະປື ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ແລະ ອຳນາດການປົກຄອງແຂວງອັດຕະປື; ຖ້າເຫັນວ່າມີການລະເມີດຄຳສັ່ງສະບັບນີ້ ມອບໃຫ້ອຳນາດການປົກຄອງແຕ່ລະຂັ້ນ ປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ລະເມີດຕາມລະບຽບກົດໝາຍ;
3. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ສົມທົບກັບຂະແໜງການກ່ຽວຂ້ອງ, ອຳນາດການປົກຄອງ 05 ເມືອງ, ບ້ານ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເຜີຍແຜ່, ເຊື່ອມຊຶມລະບຽບ, ກົດໝາຍ, ປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ດຳເນີນການຕິດຕາມ, ກວດກາ ຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນຢ່າງເຂັ້ມງວດ; ພ້ອມທັງດຳເນີນການສຳຫຼວດ, ຈັດສັນ ແລະ ວາງແຜນຟື້ນຟູປ່າທີ່ຊຸດໂຊມ ແລະ ປ່າທີ່ຖືກບຸກລຸກ ຄືນ ໄປຕາມທິດທັນເປັນເສດຖະກິດສີຂຽວໃນຕໍ່ໜ້າ ແລະ ຍາວນານ;
4. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ (ກອງກວດກາປ່າໄມ້) ປະສານສົມທົບກັບຂະແໜງການກ່ຽວຂ້ອງ, ເມືອງ ເພີ່ມທະວີຄວາມເຂັ້ມງວດໃນການຕິດຕາມ, ກວດກາພຶດຕິກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີພຶດຕິກຳລະເມີດກົດໝາຍວ່າດ້ວຍປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ບໍ່ໄດ້ຮັບອະນຸຍາດ ແມ່ນໃຫ້ທຸກ

ພາກສ່ວນ, ອົງການຈັດຕັ້ງລັດທຸກຂັ້ນ ເຮັດການສຶກສາອົບຮົມ ແລະ ມີມາດຕະການຢ່າງເດັດຂາດຕໍ່ຜູ້ກະທຳຜິດຕາມລະບຽບກົດໝາຍ;

5. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ໄດ້ອະນຸມັດຜ່ານມາເຊິ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ເຈົ້າແຂວງ**

ພົນ ວັນທອງ ກອງມະນີ

ບ່ອນນຳສົ່ງ:

| | |
|---|---|
| - ທ່ານ ເຈົ້າແຂວງ, ຮອງເຈົ້າແຂວງ ທ່ານ ລະ | 1 ສະບັບ; |
| - ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ; |
| - ຫ້ອງວ່າການແຂວງ | 1 ສະບັບ; |
| - ອົງການກວດກາລັດແຂວງ | 1 ສະບັບ; |
| - ເລຂາທິການສະພາປະຊາຊົນແຂວງ | 1 ສະບັບ; |
| - ພະແນກການກ່ຽວຂ້ອງ | 1 ສະບັບ; |
| - ເຈົ້າເມືອງ 5 ຕົວເມືອງ | 1 ສະບັບ; |
| - ເກັບຮັກສາໄວ້ | 1 ສະບັບ. |